ເງື່ອນໄຂໃນການນຳໃຊ້ ສຳລັບໂຄງການປັບປຸງປະສົບການຜູ້ນຳໃຊ້ຂອງ Acer (UEIP)
ໂຄງການປັບປຸງປະສົບການຜູ້ນຳໃຊ້ ຂອງ Acer (ຂຽນຫຍໍ້ວ່າ UEIP) ຖືກອອກແບບມາເພື່ອເກັບກຳຂໍ້ມູນໂດຍກົງຂອງ
ຜູ້ໃຊ້ແບບອັດຕະໂນມັດ ຈາກບັນດາຜູ້ໃຊ້ຕ່າງໆ ທີ່ນິຍົມໃຊ້ຜະລິດຕະພັນ ຂອງ Acer.
ພວກເຮົາຈະທຳການປັບປຸງຜະລິດຕະພັນຂອງພວກເຮົາໂດຍການຊ່ວຍເຫຼືອທາງດ້ານຂໍ້ມູນຈາກທ່ານຜູ້ໃຊ້ດັ່ງກ່າວ.
ເອກະສານສະບັບນີ້ຈະອະທິບາຍເຖິງປະເພດຂໍ້ມູນທີ່ພວກເຮົາເກັບກຳພາຍໃຕ້ ໂຄງການ UEIP ຂອງ Acer ແລະ ວິທີການທີ່ຈະນຳໃຊ້.
ການເກັບກຳ ແລະ ນຳໃຊ້ຂໍ້ມູນ
ເມື່ອທ່ານຍິນດີເຂົ້າຮ່ວມໂຄງການດ້ວຍຄວາມສະໝັກໃຈ, ຂໍ້ມູນທີ່ໄດ້ມາຈາກອຸປະກອນຂອງທ່ານ ແລະ ວິທີການທີ່ທ່ານນຳໃຊ້ໃນແຕ່ລະໄລຍະ
(ຂັ້ນສູງສູດແມ່ນ ໜຶ່ງຄັ້ງຕໍ່ວັນ) ຈະຖືກເກັບກຳ ແລະ ຈັດສົ່ງໄປຍັງ Acer, ເຊິ່ງພວກເຮົາຈະໃຊ້ຂໍ້ມູນດັ່ງກ່າວ
ເພື່ອນຳມາປັບປຸງຜະລິດຕະພັນ ແລະ ການບໍລິການຂອງພວກເຮົາ. ໂດຍອີງຕາມແຜນການຈັດສົ່ງຂໍ້ມູນແບບໄຮ້ສາຍ,
ການຈັດສົ່ງດັ່ງກ່າວອາດຈະຂຶ້ນກັບ ການໂອນຖ່າຍຂໍ້ມູນ ແລະ/ຫຼື ອາດຈະມີການເສຍຄ່າບໍລິການໃນການເຊື່ອມຕໍ່.
ຂໍ້ມູນອື່ນໆຈະລວມມີຂໍ້ມູນທີ່ນຳໄປໃຊ້ດັ່ງຕໍ່ໄປນີ້:

- ເລກໝາຍລຸ່ນຂອງເຄື່ອງຈັກ, ຊື່ໂມເດວຂອງເຄື່ອງຈັກ, ປະເທດ, ຜູ້ນຳໃຊ້ທີ່ບູດເຄື່ອງຄັ້ງທຳອິດ, ລຸ່ນ UEIP, ລຸ່ນ ແລະ ຊື່ຂອງລະບົບປະຕິບັດການ (OS), ຂໍ້ມູນຂອງ ຮາດແວ໌
- ແອັບພລິເຄຊັນປັກມຸດຢູ່ແຖບໜ້າວຽກ (Taskbar)
- ການຕິດຕັ້ງ/ຖອນການຕິດຕັ້ງ ແອບຕ່າງໆ
- ລະບົບ (Crash, Power On/Off/S3/S4)
- ຝາສະວິດ
- ການປ້ອນຂໍ້ມູນຜູ້ໃຊ້ (ເມົ້າ/ປາກກາ Stylus/ໜ້າຈໍສຳຜັດ/ປາກກາ/ລາຍນິ້ວມື)
- ລະບົບສຽງ (ນອດສຽງ, ລະດັບສຽງ)
- ໜ້າຈໍສະແດງຜົນ (ເປີດ/ປິດ/ມືວ)
- ທີ່ຢູ່ MAC ຂອງຈຸດເຂົ້າໃຊ້ (Access Point)
- ສະຖານະເຄືອຂ່າຍ (ສະຖານະການເຊື່ອມຕໍ່/ຄວາມໄວ)
- ການນຳໃຊ້ພື້ນທີ່ Disk (ຂະໜາດ, ການນຳໃຊ້)
- ການນຳໃຊ້ໄຟ (ລະດັບແບັດເຕີຣີ, ໂໝດ AC/DC)
- ການນຳໃຊ້ ແອັບພລິເຄຊັນ (ເດັສທັອບ/Metro)
- ໂໝດຂອງເຄື່ອງອຸປະກອນ
- ເຄືອຂ່າຍ (DNS)
- ການນຳໃຊ້ ພອດ USB
- Wi-Fi (ປະເພດ/ຄວາມແຮງ/ຊ່ອງ)
- HDD S.M.A.R.T.
- ແຜ່ນ SD
- ການປ່ຽນໃຫ້ເຕັມຈໍ
- ODD (ຄ່າເລີ່ມຕົ້ນ/ການສອດໃສ່/ການຖອນອອກ)
- ຈຳກັດການປ້ອນຂໍ້ມູນຂອງແປ້ນພິມ
- ຄວາມໂປ່ງແສງຂອງໜ້າຈໍ
- ຮອບວຽນຂອງແບດເຕີລີ່, ຄວາມສາມາດໃຊ້ງານສູງສຸດຂອງແບດເຕີລີ, ແຜນການໃຊ້ກະແສໄຟຟ້າ
- ແອັບ UWP
- ໄອຄອນທາງລັດຂອງເດັສທັອບ (Desktop)
- ຕັ້ງຄ່າຄວາມໄວຄອມພິວເຕີເກີນຄ່າເລີ່ມຕົ້ນ (Overclock)
- ຊື່ ແລະ ປະເພດແອັບໃນເຄື່ອງໃຊ້ການເຊື່ອມໃນກ້ອງຖ່າຍຮູບ ແລະ/ຫຼື ໄມໃນໂທລະສັບ
- ເວລາເລີ່ມ, ເວລາສຸດທ້າຍ ແລະ ຄວາມຍາວຂອງເວລາສຳລັບແອັບສະເພາະໃຊ້ການເຊື່ອມຕໍ່ກ້ອງຖ່າຍຮູບ ແລະ/ຫຼື ໄມສຳລັບວຽກປະຊຸມສະເພາະ

ຕົວຈຳແນກ ສະເປັກ-ເຄື່ອງອຸປະກອນ
ໂຄງການ UEIP ຂອງ Acer ຈະນຳໃຊ້ຕົວຈຳແນກທີ່ເປັນເອກະລັກສະເພາະດຽວກັນໃນທົ່ວໂລກ ເພື່ອລະບຸສະເປັກ-ເຄື່ອງອຸປະກອນຂອງທ່ານ
("Device-Specific Identifiers"). ຕົວຈຳແນກ ສະເປັກ-ເຄື່ອງອຸປະກອນ ດັ່ງກ່າວ
ຈະຖືກກະຈາຍແລະຕິດຕັ້ງໃນເຄື່ອງອຸປະກອນ ຂອງທ່ານ. ພວກມັນຈະບໍ່ບັນຈຸເອົາຂໍ້ມູນສ່ວນຕົວແລະພຶດຕິກຳການໃຊ້
ເພື່ອລະບຸຕົວຕົນຂອງການຕິດຕໍ່ຂອງທ່ານໄດ້. Acer ຈະນຳໃຊ້ຂໍ້ມູນທີ່ກ່າວມາຂ້າງເທິງນັ້ນ ເພື່ອຈຸດປະສົງໃນການປັບປຸງຜະລິດຕະພັນ ທີ່
Acer ຈະຜະລິດເພື່ອນຳມາສະໜອງແກ່ຜູ້ໃຊ້ໃນອະນາຄົດ ແລະ ເພື່ອຕອບສະໜອງຄວາມຕ້ອງການຕາມຄວາມເໝາະສົມ.
ຂໍ້ມູນດັ່ງກ່າວນີ້ຈະບໍ່ຖືກແບ່ງປັນ ຫຼື ຖືກເປີດເຜີຍໃຫ້ແກ່ຄູ່ຮ່ວມກິດຈະການ ຫຼື ພາກສ່ວນທີສາມ ເວັ້ນເສຍແຕ່ມີຂໍ້ບັງຄັບໃຊ້ໃນກົດໝາຍ.

ຖ້າຂ້າພະເຈົ້າເລືອກທີ່ຈະເຂົ້າຮ່ວມໂຄງການ, ຂ້າພະເຈົ້າສາມາດເລືອກທີ່ຈະອອກຄືນໄດ້ບໍ່ໃນຕໍ່ໜ້າ?
ແມ່ນແລ້ວ. ທ່ານສາມາດເລືອກທີ່ຈະອອກຈາກໂຄງການນີ້ໄດ້ທຸກເວລາ ໂດຍການປ່ຽນແປງການຕັ້ງຄ່າຜ່ານອິນເຕີເຟສຜູ້ໃຊ້ຂອງ
ໂຄງການປັບປຸງປະສົບການຜູ້ນຳໃຊ້ຂອງ Acer. ໃນເຄື່ອງອຸປະກອນທີ່ໃຊ້ລະບົບ Windows, ທ່ານສາມາດຕັ້ງຄ່າໄດ້ໂດຍໃຊ້ຟັງຊັນ 'ຄົ້ນຫາ' ໃນ Windows.
ວ່າດ້ວຍຄວາມປອດໄພ ແລະຄວາມເປັນສ່ວນຕົວ
Acer ມີຂໍ້ຜູກມັດ ໃນການປົກປ້ອງຂໍ້ມູນສ່ວນຕົວ ແລະ ຄວາມປອດໄພດ້ານຂໍ້ມູນທີ່ເກັບກຳ ດ້ວຍວິທີການຕ່າງໆ,
ລວມທັງການນຳໃຊ້ເຕັກໂນໂລຍີ ແລະ ຂັ້ນຕອນດຳເນີນງານດ້ານຄວາມປອດໄພ.

ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບສິ່ງວິທີຮັບມືກັບຂໍ້ມູນຈາກລູກຄ້າ ແລະ ວິທີການປົກປ້ອງຄວາມປອດໄພ, ໂປດເບິ່ງໃນ
ແຈ້ງການກ່ຽວກັບຂໍ້ມູນສ່ວນຕົວດັ່ງລຸ່ມນີ້.

ແຈ້ງການກ່ຽວກັບຂໍ້ມູນສ່ວນຕົວ

ໂດຍຄວາມໝາຍຂອງແຈ້ງການກ່ຽວກັບຂໍ້ມູນສ່ວນຕົວສະບັບນີ້ (ຕໍ່ໄປນີ້ຈະຮຽກວ່າ "ແຈ້ງການກ່ຽວຂໍ້ມູນສ່ວນຕົວ") ບໍລິສັດ Acer Inc. (ຕໍ່ໄປນີ້ຮຽກວ່າ "Acer", "ບໍລິສັດ", "ພວກຂ້າພະເຈົ້າ" ຫຼື "ພວກເຮົາ") ທີ່ມີສຳນັກງານໃຫ່ຍທີ່ຈົດທະບຽນ ຕັ້ງຢູ່ ຊັ້ນ 8F, No. 88, Section 1, Xin Tai 5th Road, Xizhi, New Taipei City 221, Taiwan, R.O.C, ຈະເປັນຜູ້ກຳກັບດ້ານຂໍ້ມູນ, ແຈ້ງມາຍັງທ່ານຊາບວ່າ ກ່ຽວກັບການພາກປະຕິບັດໃນການປະມວນຜົນດ້ານຂໍ້ມູນ ເຊິ່ງອາດຈະຖືກດຳເນີນການໂດຍບໍລິສັດ ໃນເວລາທີ່ທ່ານລົງທະບຽນໃນໂຄງການ UEIP.

1. ຈຸດປະສົງຂອງການປະມວນຜົນດ້ານຂໍ້ມູນ

ເມື່ອທ່ານເຂົ້າຮ່ວມໂຄງການດ້ວຍຄວາມສະໝັກໃຈ, ຂໍ້ມູນທີ່ໄດ້ມາຈາກອຸປະກອນຂອງທ່ານ ແລະ ວິທີການທີ່ທ່ານນຳໃຊ້ໃນແຕ່ລະໄລຍະ (ຂັ້ນສູງສູດແມ່ນ ໜຶ່ງຄັ້ງຕໍ່ວັນ) ຈະຖືກເກັບກຳ ແລະ ຈັດສົ່ງໄປຍັງ Acer, ເຊິ່ງພວກເຮົາຈະໃຊ້ຂໍ້ມູນດັ່ງກ່າວ ເພື່ອນຳມາປັບປຸງຜະລິດຕະພັນ ແລະການບໍລິການຂອງພວກເຮົາ. ຈຸດປະສົງຂອງການປະມວນຂໍ້ມູນດັ່ງກ່າວແມ່ນເພື່ອນຳມາປັບປຸງຄຸນນະພາບ ແລະ ປະສິດທິພາບຂອງເຄື່ອງອຸປະກອນຂອງພວກເຮົາ ຮັບປະກັນຄຸນສົມບັດທີ່ດີເລີດໃນອະນາຄົດ.
ເງື່ອນໄຂໃນການນຳໃຊ້ຈະລວມມີໃນລາຍການລະອຽດຂອງຂໍ້ມູນທີ່ Acer ຈະໄດ້ປະມວນດ້ານເນື້ອໃນໃນໂຄງການ UEIP.
ຂໍ້ມູນດັ່ງກ່າວຖືກເກັບກຳໂດຍອັດຕະໂນມັດ ແລະ Acer
ຈະບໍ່ສ້າງໂປຣໄຟລ໌ສະເພາະເພື່ອຕິດຕາມຄວາມຊິນເຄີຍດ້ານການນຳໃຊ້ຂອງທ່ານໃນເວລາທີ່ທ່ານເຂົ້າໃຊ້ອຸປະກອນ.

2. ການສື່ສານຂໍ້ມູນສ່ວນບຸກຄົນ

ຂໍ້ມູນທີ່ເກັບຈາກອຸປະກອນຂອງທ່ານຈະບໍ່ຖືກແບ່ງປັນ ຫຼື ເປີດເຜີຍຕໍ່ກັບຄູ່ຮ່ວມງານຄົນອື່ນ ຫຼື ພາກສ່ວນທີສາມອື່ນໆນອກຈາກຈະເປັນຂໍ້ບັງຄັບທີ່ຊອບດ້ວຍກົດໝາຍ.

3. ການໂອນຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຈະຖືກໂອນໄປຍັງປະເທດໄຕ້ຫວັນ, ທີ່ເປັນທີ່ຕັ້ງສຳງານໃຫ່ຍຂອງບໍລິສັດ

4. ການເກັບຮັກສາຂໍ້ມູນສ່ວນບຸກຄົນ

ຂໍ້ມູນຈະຖືກຈັດເກັບໂດຍບໍ່ໃຫ້ແກ່ຍາວເກີນກ່ວາຄວາມຈຳເປັນໃນຈຸດປະສົງຂອງການປະມວນຜົນດ້ານຂໍ້ມູນ ທີ່ກ່າວມາຂ້າງເທິງ

5. ສິດທິຂອງຜູ້ນຳໃຊ້

ທ່ານສາມາດປະຕິບັດສິດທິຂອງຕົນໄດ້ເມື່ອໃດກໍ່ຕາມ ອີງຕາມຂໍ້ກຳນົດທາງກົດໝາຍທີ່ກ່ຽວຂ້ອງ, ລວມທັງສິດທິ ທີ່ຈະໄດ້ຮັບການຢືນຢັນວ່າຂໍ້ມູນສ່ວນຕົວ ຫຼື ບໍ່ແມ່ນຂໍ້ມູນສ່ວນຕົວ ກ່ຽວກັບຕົວທ່ານທີ່ນອນຢູ່ໃນໄຟລ໌ຂໍ້ມູນຂອງ Acer, ເພື່ອ ຮັບຮູ້ດ້ານເນື້ອໃນ ແລະ ແຫຼ່ງທີ່ມາຂອງຂໍ້ມູນ, ເພື່ອຢັ້ງຢືນຄວາມຖືກຕ້ອງ, ຫຼື ມີສິດຂໍຮ້ອງໃຫ້ມີການດັດແປງ ຫຼື ມີການຍົກເລີກ.
ທ່ານສາມາດເລືອກທີ່ຈະອອກຈາກໂຄງການ UEIP
ໄດ້ທຸກເວລາພຽງແຕ່ປ່ຽນແປງການຕັ້ງຄ່າຜ່ານໜ້າໂປຣແກຣມຂອງໂຄງການປັບປຸງປະສົບການຜູ້ໃຊ້ Acer.
ສຳລັບທ່ານມີຄຳຖາມ ຫຼື ຂໍ້ຄິດເຫັນ ກ່ຽວກັບ ໃບແຈ້ງການກ່ຽວກັບຂໍ້ມູນສ່ວນຕົວສະບັບດັ່ງກ່າວນີ້ ຫຼື ເວັບໄຊທ໌ຂອງພວກເຮົາ, ກະລຸນາຕິດຕໍ່ພວກເຮົາທີ່: privacy_officer@acer.com. ເພື່ອທີ່ພວກເຮົາຈະສະໜອງການບໍລິການໄດ້ໄວຂຶ້ນ, ກະລຸນາສົ່ງຂໍ້ຊັກຖາມເປັນພາສາອັງກິດ ຖ້າເປັນໄປໄດ້ ແລະ ໃຫ້ການແນະນຳແກ່ພວກເຮົາ ກ່ຽວກັບປະເທດທີ່ທ່ານກຳລັງທຳການຕິດຕໍ່, ພ້ອມໃຫ້ຄຳອະທິບາຍກ່ຽວກັບ ຮູບລັກສະນະແລະໂມເດວ ຫລື ຮຸ່ນຂອງຜະລິດຕະພັນຂອງທ່ານ (ຖ້າມີ).